ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 12 /ຈຂ.ອປ

ອັດຕະປື, ວັນທີ...19 ກໍລະກົດ 2018

## ຄຳແນະນຳ
## ກ່ຽວກັບການເຜີຍແຜ່ ເຊື່ອມຊຶມ ດຳລັດເລກທີ 348/ບລ ວ່າດ້ວຍ ມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ

- ອີງຕາມ: ກົດໝາຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ: ດຳລັດເລກທີ 348/ບລ ລົງວັນທີ 18 ພະຈິກ 2017. ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ

ເພື່ອເຮັດໃຫ້ການເຜີຍແຜ່, ເຊື່ອມຊຶມດຳລັດເລກທີ 348/ບລ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາໄດ້ຮັບການຜັນຂະຫຍາຍຢ່າງທົ່ວເຖິງ ໃຫ້ແກ່ພະນັກງານຫຼັກແຫຼ່ງ, ພະນັກງານວິຊາການ. ໃນທຸກຂົງເຂດວຽກງານ ຕໍ່ກັບການຈັກຕັ້ງປະຕິບັດມາດຕະຖານການພົ້ນທຸກ ແລະ ມາດຕະຖານການພັດທະນາ ໃຫ້ຖືກຕ້ອງຕາມເນື້ອໃນຈິດໃຈຂອງດຳລັດ, ເນື່ອງຈາກວ່າ: ການປະເມີນມາດຕະຖານການພົ້ນທຸກ ແລະ ມາດຕະຖານການພັດທະນາ ແມ່ນມີຄວາມສຳຄັນເປັນພິເສດ ເພາະມັນເປັນຜົນງານການຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ມະຕິກອງປະຊຸມຄັ້ງທີ X ຂອງອົງຄະນະພັກແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຄັ້ງ VIII ກໍ່ຄືການແກ້ໄຂຄວາມທຸກຍາກ, ການສ້າງຄອບຄົວພັດທະນາ, ສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ແລະ ເມືອງເຂັ້ມແຂງຮອບດ້ານ ໃຫ້ບັນລຸຕາມຄາດໝາຍ ຕາມມະຕິກອງປະຊຸມໃຫຍ່ຂອງແຂວງໄດ້ກຳນົດໄວ້.

### ເຈົ້າແຂວງແນະນຳ ດັ່ງນີ້:

1. ໃຫ້ຫົວໜ້າພະແນກການ, ອົງການ, ກອງບັນຊາການ ປກຊ-ປກສ ແລະ ເຈົ້າເມືອງ 05 ຕົວເມືອງ ເປັນເຈົ້າການກະກຽມດ້ານຕ່າງໆ ເພື່ອຈັດຕັ້ງການເຊື່ອມຊຶມ ດຳລັດເລກທີ 348/ບລ ວ່າດ້ວຍ ມາດຕະຖານການພົ້ນທຸກ ແລະ ມາດຕະຖານການພັດທະນາ ແລະ ບົດແນະນຳ 0830/ກປ ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ມາດຕະຖານການພົ້ນທຸກ ແລະ ມາດຕະຖານການພັດທະນາ ໃຫ້ແກ່ພະນັກງານຫຼັກແຫຼ່ງໃນຂະແໜງການຂອງຕົນ ໃຫ້ຮັບຮູ້, ເຂົ້າໃຈຕໍ່ເນື້ອໃນຈິດໃຈຂອງເອກະສານດັ່ງກ່າວ. ເພື່ອການຊີ້ນຳ-ນຳພາ ແລະ ແຕ່ງຕັ້ງພະນັກງານ ໃນຂອບເຂດຄວາມຮັບຜິດຊອບຂອງຂະແໜງການຂອງຕົນ ລົງກໍ່ສ້າງຮາກຖານການເມືອງຕາມຂະແໜງການຕາມສາຍຕັ້ງຂອງຕົນ ຢູ່ຂັ້ນເມືອງ ແລະ ຂັ້ນບ້ານ ເພື່ອປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ, ສ້າງບ້ານພັດທະນາ ສ້າງບ້ານໃຫຍ່

ກາຍເປັນເມືອງ ໃນຈຸດສຸມທີ່ແຂວງກຳນົດ ຢູ່ແຕ່ລະເມືອງ ໂດຍສຸມໃສ່ສ້າງບ້ານແບບຢ່າງຢູ່ພາຍໃນຈຸດສຸມດັ່ງກ່າວໃຫ້ສຳເລັດຕາມເປົ້າໝາຍທີ່ກຳນົດໄວ້.

2. ພາຍຫຼັງທີ່ຈັດຕັ້ງເຊື່ອມຊຶມສຳເລັດແລ້ວໃຫ້ແຕ່ລະພາກສ່ວນລາຍງານມາພະແນກກະສິກຳ ແລະ ປ່າໄມ້ແຂວງ ຊ້າສຸດບໍ່ໃຫ້ກາຍວັນທີ 15/08/2018. ເພື່ອຈະໄດ້ສັງລວມລາຍງານຕໍ່ກະຊວງກະສິກຳ ແລະ ປ່າໄມ້ຮັບຊາບ.

3. ເມື່ອຫົວໜ້າພະແນກການ, ອົງການ, ກອງບັນຊາການ ປກຊ-ປກສ ແລະ 5ຕົວເມືອງ ໄດ້ຄຳສັ່ງແນະນຳສະບັບນີ້ແລ້ວ ຈົ່ງຮີບຮ້ອນຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ.

4. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮ. ເຈົ້າແຂວງ

ຜູ້ປະຈຳການ

ແຂວງອັດຕະປື
ເຈົ້າແຂວງແຂວງອັດຕະປື

ອຸ່ນຫ້າ ໄຊຍະສິດ